ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 01 /ນຍ

# ດຳລັດ

## ວ່າດ້ວຍ ການປົກປ້ອງສິດທິບັດ, ອະນຸສິດທິບັດ ແລະແບບອຸດສາຫະກຳ

- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຕ່າງປະເທດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບລົງວັນທີ 14 ມີນາ 1994;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບລົງວັນທີ 29 ພະຈິກ 1990;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ສະບັບລົງວັນທີ 14 ຕຸລາ 1995;
- ອີງຕາມ ການສະເໜີ ຂອງອົງການ ວິທະຍາສາດ, ເຕັກໂນໂລຊີ ແລະສິ່ງແວດລ້ອມ ສະບັບເລກທີ 339/ອວຕສ, ລົງວັນທີ 2 ມີນາ 2000.

### ນາຍົກລັດຖະມົນຕີອອກດຳລັດ:

### ໝວດທີ I
### ຫລັກການທົ່ວໄປ

ມາດຕາ 1. ດຳລັດສະບັບນີ້ວາງອອກເພື່ອປົກປ້ອງ ສິດທິບັດ, ອະນຸສິດທິບັດແລະ ແບບອຸດສາຫະກຳ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຊຸກຍູ້ການປະດິດສ້າງ, ການຖ່າຍທອດເຕັກໂນໂລຊີ, ການຄົ້ນຄ້ວາ ແລະ ການພັດທະນາ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ຊຸກຍູ້ ແລະ ສົ່ງເສີມການຄ້າ ແລະ ການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ຕ້ານກັບການຝ່າຝືນສິດທິ ທາງດ້ານຊັບສິນອຸດສາຫະກຳ ແລະ ການດຳເນີນທຸລະກິດທີ່ຜິດກົດໝາຍ.

ມາດຕາ 2. ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຄຸ້ມຄອງ ແລະ ປົກປ້ອງ ສິດທິບັດ, ອະນຸສິດທິບັດ ແລະ ແບບອຸດສາຫະກຳ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມລະບຽບກົດໝາຍ.

ມາດຕາ 3. ສິດທິບັດ, ອະນຸສິດທິບັດ ແລະ ແບບອຸດສາຫະກຳ ຈະໄດ້ຮັບການປົກປ້ອງ ກໍ່ຕໍ່ເມື່ອໄດ້ຂຶ້ນທະບຽນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫລື ໄດ້ຂຶ້ນທະບຽນນຳອົງການຈັດຕັ້ງຂຶ້ນທະບຽນສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ.

ມາດຕາ 4. ບຸກຄົນ ຫລື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ທຳການຄົ້ນຄວ້າວິທະຍາສາດ, ເຮັດທຸລະກິດ, ຜະລິດສິນຄ້າ ແລະ ບໍລິການ ທີ່ຖືກຕ້ອງຕາມກົດໝາຍ ມີສິດ ຂໍຂຶ້ນທະບຽນການປະດິດສ້າງ, ສິ່ງປະດິດ ແລະ ແບບອຸດສາຫະກຳ ຢູ່ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຫລື ຂໍຂຶ້ນທະບຽນນຳອົງການຈັດຕັ້ງຂຶ້ນທະບຽນສາກົນ ທີ່ສ້າງຕັ້ງຂຶ້ນດ້ວຍສົນທິສັນຍາສາກົນຕ່າງໆ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໄດ້ເຂົ້າຮ່ວມເປັນພາຄີ.

ບຸກຄົນ ຫລື ນິຕິບຸກຄົນ ຢູ່ຕ່າງປະເທດ ທີ່ມີຈຸດປະສົງຂໍຂຶ້ນທະບຽນການປະດິດສ້າງ, ສິ່ງປະດິດ ແລະ ແບບອຸດສາຫະກຳ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງໄດ້ມີຕົວແທນທີ່ຖືກຕ້ອງຕາມກົດໝາຍ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມາດຕາ 5. ເຈົ້າຂອງທະບຽນກ່ອນຈະອະນຸຍາດໃຫ້ ບຸກຄົນອື່ນນຳໃຊ້ສິດທິບັດ, ອະນຸສິດທິບັດ ຫລື ແບບອຸດສາຫະກຳ ຂອງຕົນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຮັບຮູ້ເສຍກ່ອນ.

ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ກ່ອນຈະນຳໃຊ້ສິດທິບັດ, ອະນຸສິດທິບັດ ແລະ ແບບອຸດສາຫະກຳ ທີ່ໄດ້ຮັບການປົກປ້ອງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລ້ວນັ້ນຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າຂອງທະບຽນເສຍກ່ອນ.

ບຸກຄົນ ຫລື ນິຕິບຸກຄົນ ຕ້ອງການນຳໃຊ້ການປະດິດສ້າງ ທີ່ໄດ້ຮັບສິດທິບັດ, ສິ່ງປະດິດ ຫລື ແບບອຸດສາຫະກຳ ທີ່ໄດ້ຂຶ້ນທະບຽນແລ້ວຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລ້ວນັ້ນ ຈະຕ້ອງໄດ້ເຮັດສັນຍານຳກັນກັບເຈົ້າຂອງສິດທິບັດ, ອະນຸສິດທິບັດ ຫລື ແບບອຸດສາຫະກຳດັ່ງກ່າວ.

# ໝວດທີ II
## ສິດທິບັດ

ມາດຕາ 6. " ສິດທິບັດ " ແມ່ນ ເອກະສານຢັ້ງຢືນ ກ່ຽວກັບການປົກປ້ອງການປະດິດສ້າງ ເຊິ່ງ " ການປະດິດສ້າງ " ໝາຍເຖິງຄວາມຄິດ ຂອງນັກປະດິດສ້າງ ໃນການແກ້ໄຂບັນຫາຕົວຈິງສະເພາະໃດໜຶ່ງ ທາງດ້ານເຕັກໂນໂລຊີ.

ມາດຕາ 7. ການປະດິດສ້າງໃດໜຶ່ງ ຈະມີສິດໄດ້ຮັບການປົກປ້ອງ ກໍຕໍ່ເມື່ອການປະດິດສ້າງດັ່ງກ່າວນັ້ນ ແມ່ນອັນໃໝ່, ມີຂັ້ນຕອນກ່ຽວກັບການປະດິດສ້າງ ແລະ ສາມາດນຳໃຊ້ເຂົ້າສູ່ ການຜະລິດໄດ້.

- ການປະດິດສ້າງໃດໜຶ່ງທີ່ຖືວ່າ ເປັນການປະດິດສ້າງໃໝ່ ແມ່ນການປະດິດສ້າງນັ້ນທີ່ບໍ່ເຄີຍມີມາກ່ອນຄື ໝາຍເຖິງສິ່ງປະດິດສ້າງທຸກຢ່າງ ທີ່ບໍ່ເຄີຍຖືກເປີດເຜີຍສູ່ສາທາລະນະຊົນຢູ່ແຫ່ງໃດໜຶ່ງໃນໂລກ ດ້ວຍວາລະສານ ຫລື ດ້ວຍຄວາມຮັບຮູ້ຈາກມະຫາຊົນ, ດ້ວຍການນຳໃຊ້ຕົວຈິງ ຫລື ດ້ວຍຮູບການອື່ນ ກ່ອນການຂຶ້ນທະບຽນ ຫລື ກ່ອນວັນໄດ້ຮັບບຸລິມະສິດ ຂອງຄຳຮ້ອງຂໍຂຶ້ນທະບຽນການປະດິດສ້າງ.

- ການປະດິດສ້າງໃດໜຶ່ງ ທີ່ຖືວ່າມີຂັ້ນຕອນການປະດິດສ້າງ ກໍຕໍ່ເມື່ອການປະດິດສ້າງນັ້ນມີການພົວພັນເຖິງ ການປະດິດສ້າງທີ່ເຄີຍມີມາກ່ອນ ເຊິ່ງບຸກຄົນທີ່ມີຄວາມຮູ້ດ້ານນັ້ນສາມາດເຂົ້າໃຈໄດ້ຢ່າງຈະແຈ້ງ.

- ການປະດິດສ້າງໃດໜຶ່ງສາມາດນຳໃຊ້ເຂົ້າສູ່ການຜະລິດໄດ້ ກໍຕໍ່ເມື່ອການປະດິດສ້າງນັ້ນໄດ້ຖືກນຳໃຊ້ໃນອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການປະມົງ ແລະ ການບໍລິການອື່ນໆ.

ມາດຕາ 8. ບຸກຄົນ ຫລື ນິຕິບຸກຄົນ ທີ່ມີເງື່ອນໄຂຮັບສິດທິບັດໄດ້ກໍຕໍ່ເມື່ອໄດ້ຂໍຂຶ້ນທະບຽນການປະດິດສ້າງ ຂອງຕົນ ຢູ່ທີ່ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຫລື ນຳອົງການຂຶ້ນທະບຽນສາກົນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ.

ມາດຕາ 9. ຜູ້ມີສິດທິ ໃນການຮັບສິດທິບັດ ແມ່ນຜູ້ປະດິດສ້າງ.

- ໃນກໍລະນີ ມີຜູ້ປະດິດສ້າງ 2 ຄົນ ຫລື ຫລາຍກວ່ານັ້ນ ໄດ້ຮ່ວມກັນເຮັດການປະດິດສ້າງໃດໜຶ່ງຂຶ້ນມາ ສິດໃນການຮັບສິດທິບັດນັ້ນ ແມ່ນຕົກເປັນ ຂອງໝົດທຸກຄົນໃນໝູ່ຄະນະທີ່ຮ່ວມກັນປະດິດສ້າງ.

- ໃນກໍລະນີ ມີຜູ້ປະດິດສ້າງ 2 ຄົນ ຫລື ຫລາຍກວ່ານັ້ນ ໄດ້ເຮັດການປະດິດສ້າງແບບດຽວກັນຂຶ້ນມາໂດຍຕ່າງຄົນຕ່າງເຮັດ ສິດໃນການຮັບສິດທິບັດແມ່ນຕົກເປັນ ຂອງຜູ້ມາຂໍຂຶ້ນທະ

ບຽນກ່ອນຫມູ່ ຫລື ຜູ້ທີ່ໄດ້ຮັບວັນບຸລິມະສິດ ຂອງຄຳຮ້ອງຂໍຂຶ້ນທະບຽນການປະດິດສ້າງ ຈົນກວ່າວ່າຄຳຮ້ອງຂໍຂຶ້ນທະບຽນດັ່ງກ່າວຖືກຖອນ, ຖືກປະລະ ຫລື ຖືກປະຕິເສດ.

- ໃນກໍລະນີ ມີການປະດິດສ້າງໃດໜຶ່ງຂຶ້ນມາ ໃນໄລຍະການປະຕິບັດງານຕາມສັນຍາວ່າຈ້າງແຮງງານ ສິດໃນການຮັບສິດທິບັດແມ່ນຕົກເປັນຂອງນາຍຈ້າງ ເວັ້ນເສຍແຕ່ມີສັນຍາຢ່າງອື່ນນຳກັນ.

ຜູ້ປະດິດສ້າງຕ້ອງໄດ້ບົ່ງຊື່ຕົນໃນໃບສິດທິບັດ ເວັ້ນເສຍແຕ່ຜູ້ກ່ຽວໄດ້ສະເໜີເປັນລາຍລັກອັກສອນ ເຖິງອົງການຈັດຕັ້ງທີ່ກ່ຽວຂ້ອງຮັບຮູ້ ກ່ຽວກັບຈຸດປະສົງທີ່ບໍ່ຕ້ອງການໃຫ້ບົ່ງຊື່ຕົນ, ຖ້າບໍ່ດັ່ງນັ້ນທຸກສັນຍາ ຫລື ທຸກການກະທຳ ຂອງຜູ້ປະດິດສ້າງຕໍ່ບຸກຄົນ ຫລື ນິຕິບຸກຄົນອື່ນ ຈະບໍ່ມີຜົນສັກສິດທາງດ້ານກົດຫມາຍ.

**ມາດຕາ 10.** ການປະດິດສ້າງ ທີ່ບໍ່ອະນຸຍາດໃຫ້ປົກປ້ອງໄດ້ ປະກອບມີ: ການຄົ້ນພົບສິ່ງທີ່ມີມາກ່ອນແລ້ວ, ທິດສະດີວິທະຍາສາດ, ສູດຄິດໄລ່ຄະນິດສາດ, ແຜນວາດ, ລະບຽບການ ຫລື ວິທີການເພື່ອດຳເນີນທຸລະກິດ, ການສະແດງອອກ ທີ່ພົວພັນສະເພາະເຖິງຈິດຕະສາດ ຫລື ເກມຫລິ້ນຕ່າງໆ, ວິທີການປິ່ນປົວຄົນແລະສັດ, ການປະດິດສ້າງທີ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫລື ວັດທະນາທຳຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 11.** ຄຳຮ້ອງຂໍ ທີ່ຈະຍື່ນຕໍ່ອົງການຈັດຕັ້ງຂຶ້ນທະບຽນເພື່ອຂໍສິດທິບັດຕ້ອງປະກອບດ້ວຍ: ໃບຄຳຮ້ອງ, ບົດອະທິບາຍ, ບົດລາຍງານ, ແຜນວາດ ແລະ ບົດສັງເຂບ.

- ໃບຄຳຮ້ອງ ຕ້ອງໄດ້ກຳນົດກ່ຽວກັບການສະເໜີຂໍອະນຸມັດສິດທິບັດ, ຊື່ແລະຂໍ້ມູນຕ່າງໆກ່ຽວກັບຜູ້ສະເໜີ, ຜູ້ປະດິດສ້າງແລະບໍລິສັດຕົວແທນ ແລະຊື່ຂອງການປະດິດສ້າງດັ່ງກ່າວ. ໃນກໍລະນີຜູ້ສະເໜີບໍ່ແມ່ນຜູ້ປະດິດສ້າງ ຈະຕ້ອງມີໃບມອບສິດຈາກຜູ້ປະດິດສ້າງຄັດຕິດມາພ້ອມ.

- ບົດອະທິບາຍ ຕ້ອງໄດ້ຊີ້ແຈງຢ່າງຈະແຈ້ງ ແລະ ຄົບຖ້ວນກ່ຽວກັບການປະດິດສ້າງ ໂດຍໃຫ້ບຸກຄົນອື່ນ ທີ່ມີຄວາມຮູ້ດ້ານນີ້ ສາມາດນຳເອົາໄປໃຊ້ໄດ້ ແລະ ຢ່າງນ້ອຍຜູ້ຮ້ອງຂໍ ຈະຕ້ອງຮູ້ສ່ວນໃດໜຶ່ງ ຂອງການປະດິດສ້າງດັ່ງກ່າວ.

- ບົດລາຍງານໜຶ່ງ ຫລື ຫລາຍສະບັບ ຕ້ອງໄດ້ກຳນົດຢ່າງຈະແຈ້ງ ແລະ ຊັດເຈນ ກ່ຽວກັບ ສິ່ງທີ່ຕ້ອງການປົກປ້ອງ ແລະໃຫ້ສອດຄ່ອງກັບບົດອະທິບາຍ.

- ແຜນວາດ ຮຽກຮ້ອງໃຫ້ປະກອບມາພ້ອມ ໃນກໍລະນີຄວາມຈຳເປັນ ເພື່ອໃຫ້ເຂົ້າໃຈໄດ້ງ່າຍ ກ່ຽວກັບການປະດິດສ້າງ.

- ບົດສັງເຂບ ໃຊ້ສະເພາະເປັນຂໍ້ມູນທາງດ້ານເຕັກນິກເທົ່ານັ້ນ ແລະ ຈະບໍ່ໄດ້ຖືກພິຈາລະນາໃຫ້ນຳໃຊ້ ເພື່ອກຳນົດຂອບເຂດຂອງການປົກປ້ອງ.

ຜູ້ຍື່ນຄຳຮ້ອງສາມາດຖອນຄຳຮ້ອງໄດ້ ສະເພາະໃນໄລຍະການພິຈາລະນາ ຫລື ກ່ອນການອອກສິດທິບັດເທົ່ານັ້ນ.

ມາດຕາ 12. ຄຳຮ້ອງໜຶ່ງສາມາດໃຊ້ສະເພາະກັບ ການປະດິດສ້າງອັນດຽວເທົ່ານັ້ນ ຫລື ໃຊ້ສະເພາະກັບການປະດິດສ້າງເປັນກຸ່ມ ທີ່ມີການພົວພັນເຊິ່ງກັນ ແລະ ກັນ ເຊິ່ງໄດ້ກຳນົດເປັນການປະດິດສ້າງອັນດຽວ.

ໃນໄລຍະການພິຈາລະນາຄຳຮ້ອງຂໍຂຶ້ນທະບຽນ ຜູ້ຍື່ນຄຳຮ້ອງ ສາມາດດັດແກ້ຄຳຮ້ອງດັ່ງກ່າວໄດ້ ແຕ່ຕ້ອງຮັກສາເນື້ອໃນຕາມທີ່ໄດ້ກຳນົດໄວ້ຢູ່ໃນຄຳຮ້ອງສະບັບເດີມ. ໃນໄລຍະການພິຈາລະນາຄຳຮ້ອງ ຜູ້ຍື່ນຄຳຮ້ອງ ຍັງສາມາດແບ່ງຄຳຮ້ອງເດີມໃຫ້ເປັນສອງ ຫລື ຫລາຍສະບັບຍ່ອຍ ເຊິ່ງແຕ່ລະສະບັບຕ້ອງໄດ້ຮັກສາເນື້ອໃນຕາມທີ່ໄດ້ກຳນົດໄວ້ຢູ່ໃນຄຳຮ້ອງສະບັບເດີມ ແລະ ຜູ້ກ່ຽວຍັງມີສິດ ໄດ້ຮັບຕາມກຳນົດວັນເວລາທີ່ໄດ້ຍື່ນຄຳຮ້ອງ ແລະ ວັນທີ່ໄດ້ຮັບບຸລິມະສິດ ຂອງຄຳຮ້ອງສະບັບເດີມ.

ໃນກໍລະນີ ສິດທິບັດໄດ້ຖືກອະນຸມັດໄປກ່ອນໜ້ານີ້ແລ້ວ ແຕ່ຄຳຮ້ອງຂໍສິດທິບັດດັ່ງກ່າວບໍ່ໄດ້ ສອດຄ່ອງກັບເງື່ອນໄຂ ຂອງການກ່ຽວພັນກັບການປະດິດສ້າງ ຈະບໍ່ຖືກນຳໃຊ້ເປັນຫລັກຖານເພື່ອຂໍລົບລ້າງສິດທິບັດດັ່ງກ່າວ.

ມາດຕາ 13. ໃນຄຳຮ້ອງ ສາມາດຮຽກຮ້ອງເອົາການປະກາດບຸລິມະສິດ ຕາມທີ່ກຳນົດຢູ່ໃນສົນທິສັນຍາກຸງປາຣີ ວ່າດ້ວຍ ການປົກປ້ອງຊັບສິນອຸດສາຫະກຳ ເຊິ່ງບຸລິມະສິດດັ່ງກ່າວແມ່ນໄດ້ມາຈາກການຍື່ນຄຳຮ້ອງ ຂອງຜູ້ຍື່ນຄຳຮ້ອງ ຫລື ຂອງຜູ້ທີ່ມີສິດກ່ອນໜ້ານີ້ ຢູ່ຕ່າງປະເທດ, ຢູ່ພາກພື້ນ ຫລື ຢູ່ນຳອົງການຈັດຕັ້ງສາກົນໃດໜຶ່ງ ທີ່ເປັນພາຄີ ຂອງສົນທິສັນຍາດັ່ງກ່າວ.

ໃນເມື່ອ ມີການຮ້ອງຂໍເອົາການປະກາດບຸລິມະສິດ ອົງການຈັດຕັ້ງຂຶ້ນທະບຽນ ສາມາດຮຽກຮ້ອງໃຫ້ຜູ້ຍື່ນຄຳຮ້ອງຕອບສະໜອງ ສຳເນົາ ຂອງຄຳຮ້ອງຂໍຂຶ້ນທະບຽນສະບັບກ່ອນໜ້ານີ້ ທີ່ເຄີຍໄດ້ຍື່ນ ຢູ່ຕ່າງປະເທດມາແລ້ວ ໂດຍໃຫ້ມີການຢັ້ງຢືນເຖິງຄວາມຖືກຕ້ອງ ຂອງຫ້ອງການຂຶ້ນທະບຽນ ເຊິ່ງການຮ້ອງຂໍດັ່ງກ່າວຈະຕ້ອງໃຫ້ສອດຄ່ອງກັບໄລຍະເວລາ ຕາມທີ່ໄດ້ກຳນົດຢູ່ໃນສົນທິສັນຍາກຸງປາຣີ. ໃນກໍລະນີ ການຈັດຕັ້ງຂຶ້ນທະບຽນ ເຫັນວ່າບໍ່ໄດ້ຕອບສະໜອງຕາມເງື່ອນໄຂ ທີ່ໄດ້ກຳນົດຢູ່ໃນມາດຕານີ້ ຫລື ຢູ່ໃນລະບຽບການອື່ນທີ່ກ່ຽວຂ້ອງ ການຮຽກຮ້ອງເອົາວັນບຸລິມະສິດດັ່ງກ່າວ ຈະບໍ່ຖືກພິຈາລະນາ.

ມາດຕາ 14. ໃນເມື່ອມີການຮຽກຮ້ອງ ຂອງອົງການຈັດຕັ້ງຂຶ້ນທະບຽນ ຜູ້ຍື່ນຄຳຮ້ອງຂໍສິດທິບັດຕ້ອງໄດ້ຕອບສະໜອງຂໍ້ມູນ ກ່ຽວກັບວັນເວລາ ແລະ ຈຳນວນຄຳຮ້ອງທີ່ໄດ້ຂໍຂຶ້ນທະບຽນຢູ່ຕ່າງປະເທດມາແລ້ວ ໂດຍສະເພາະຄຳຮ້ອງທີ່ພົວພັນເຖິງການປະດິດສ້າງແບບດຽວກັນ ທີ່ກຳລັງຂໍຂຶ້ນທະບຽນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ສ່ວນຂໍ້ມູນທີ່ພົວພັນເຖິງຄຳຮ້ອງຂໍຂຶ້ນທະບຽນຢູ່ຕ່າງປະເທດນັ້ນ ຕ້ອງປະກອບດ້ວຍ :

( ກ ) ສຳເນົາເອກະສານຢັ້ງຢືນເຖິງຜົນ ຂອງການຄົ້ນຄວ້າ ຫລື ການພິສູດ ຂອງຄຳຮ້ອງຂໍຂຶ້ນທະບຽນຢູ່ຕ່າງປະເທດ;

( ຂ ) ສຳເນົາສິດທິບັດ ທີ່ໄດ້ຮັບອະນຸມັດ ຈາກການຍື່ນຄຳຮ້ອງຂໍຂຶ້ນທະບຽນຢູ່ຕ່າງປະເທດ; ຫລື

( ຄ ) ສຳເນົາ ຂອງເອກະສານຕັດສິນເທື່ອສຸດທ້າຍ ກ່ຽວກັບການປະຕິເສດອອກສິດທິບັດໃຫ້ແກ່ຄຳຮ້ອງຂໍຂຶ້ນທະບຽນຢູ່ຕ່າງປະເທດ.

ມາດຕາ 15. ໃນເມື່ອຄຳຮ້ອງ ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກຳນົດຢູ່ໃນມາດຕາ 11 ຂອງດຳລັດສະບັບນີ້ແລ້ວ ອົງການຈັດຕັ້ງຂຶ້ນທະບຽນຈະບັນທຶກ ວັນເວລາ ເຊິ່ງແມ່ນວັນເວລາ ຂອງການໄດ້ມາຍື່ນຄຳຮ້ອງ.

ໃນກໍລະນີຄຳຮ້ອງ ບໍ່ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກ່າວມາຂ້າງເທິງນັ້ນ ອົງການຈັດຕັ້ງຂຶ້ນທະບຽນ ຈະແນະນຳໃຫ້ຜູ້ຍື່ນຄຳຮ້ອງ ດັດແກ້ຄຳຮ້ອງໃຫ້ຖືກຕ້ອງ ສ່ວນການບັນທຶກວັນເວລາ ຂອງການຍື່ນຄຳຮ້ອງນັ້ນ ຈະປະຕິບັດຕາມໄລຍະເວລາ ຂອງການຍື່ນຄຳຮ້ອງສະບັບດັດແກ້ ຖ້າບໍ່ດັ່ງນັ້ນຈະຖືວ່າຄຳຮ້ອງດັ່ງກ່າວຖືກໂມຄະ.

ມາດຕາ 16. ພາຍຫລັງການພິຈາລະນາຄຳຮ້ອງ ທີ່ເຫັນວ່າຖືກຕ້ອງຕາມເງື່ອນໄຂຕ່າງໆ ຂອງດຳລັດສະບັບນີ້ແລ້ວ ອົງການຈັດຕັ້ງຂຶ້ນທະບຽນ ຈະແຈ້ງໃຫ້ເສຍຄ່າທຳນຽມຕາມລະບຽບການທີ່ກ່ຽວຂ້ອງ, ເຜີຍແຜ່ສູ່ສາທາລະນະຊົນ ແລະ ອອກສິດທິບັດໃຫ້ຜູ້ຍື່ນຄຳຮ້ອງດັ່ງກ່າວ.

ໃນກໍລະນີຄຳຮ້ອງຫາກຖືກປະຕິເສດ ອົງການຈັດຕັ້ງຂຶ້ນທະບຽນ ຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບ ກ່ຽວກັບການຕົກລົງຂັ້ນສຸດທ້າຍ.

ມາດຕາ 17. ອາຍຸການ ຂອງສິດທິບັດມີກຳນົດ 20 ປີ ນັບແຕ່ວັນຍື່ນຄຳຮ້ອງຂໍສິດທິບັດ. ເພື່ອຮັກສາອາຍຸການ ຂອງສິດທິບັດ ເຈົ້າຂອງສິດທິບັດ ຕ້ອງໄດ້ເສຍຄ່າທຳນຽມລ່ວງຫນ້າແຕ່ລະປີ.

- ໃນກໍລະນີ ເຈົ້າຂອງສິດທິບັດບໍ່ໄດ້ເສຍຄ່າທຳນຽມລ່ວງຫນ້າແຕ່ລະປີ ຄຳຮ້ອງຂໍສິດທິບັດດັ່ງກ່າວ ຈະຖືກຖອນ ຫລື ສິດທິບັດດັ່ງກ່າວຈະບໍ່ມີຜົນບັງຄັບໃຊ້.
- ໃນກໍລະນີ ເຈົ້າຂອງສິດທິບັດມີເຫດຜົນອ້າງອີງ ກ່ຽວກັບຄວາມລ້າຊ້າໃນການສຳລະຄ່າທຳນຽມ ອົງການຈັດຕັ້ງຂຶ້ນທະບຽນ ຈະອະນຸຍາດໃຫ້ໄດ້ພາຍໃນກຳນົດບໍ່ເກີນ 6 ເດືອນ.

ມາດຕາ 18. ເຈົ້າຂອງສິດທິບັດ ມີສິດນຳໃຊ້ສິດທິບັດຂອງຕົນໄດ້ສອງກໍລະນີຄື:

(1) ມີສິດທຳການຜະລິດ, ການຄຸ້ມຄອງການນຳເຂົ້າ, ການເກັບຮັກສາ, ການຈຳຫນ່າຍ, ການຂາຍ ແລະ ການນຳໃຊ້ ຜະລິດຕະພັນໃດຫນຶ່ງ ໃນກໍລະນີ ທີ່ສິດທິບັດໄດ້ອອກໃຫ້ກ່ຽວກັບຜະລິດຕະພັນ;

(2) ມີສິດນຳໃຊ້ກຳມະວິທີ ຫລື ການກະທຳສິ່ງໃດຫນຶ່ງ ທີ່ພົວພັນເຖິງຂັ້ນຕອນການຜະລິດ, ການຄຸ້ມຄອງການນຳເຂົ້າ, ການເກັບຮັກສາ, ການຈຳຫນ່າຍ, ການຂາຍ ແລະ ການນຳໃຊ້ ຜະລິດຕະພັນໃດຫນຶ່ງ ໃນກໍລະນີທີ່ສິດທິບັດໄດ້ອອກໃຫ້ກ່ຽວກັບກຳມະວິທີ.

ມາດຕາ 19. ເຈົ້າຂອງສິດທິບັດ ມີສິດຮ້ອງຟ້ອງຕໍ່ສານ ຫລື ສະເໜີຕໍ່ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ກ່ຽວກັບການລະເມີດໃນການນຳໃຊ້ການປະດິດສ້າງຂອງຕົນໂດຍບໍ່ໄດ້ຮັບອະນຸຍາດ, ແຕ່ສິດທີ່ດັ່ງກ່າວ ຈະບໍ່ກວມເອົາ ຫລື ກ່ຽວຂ້ອງກັບຜະລິດຕະພັນສິນຄ້າ ຂອງຕົນເອງ ຫລື ຜູ້ທີ່ຖືກມອບສິດທີ່ໄດ້ວາງອອກສູ່ຕະຫລາດ ຫລື ພົວພັນກັບທຸກການກະທຳ ຂອງບຸກຄົນອື່ນ ກ່ອນການອອກສິດທິບັດ ຮວມທັງ ການນຳໃຊ້ຜະລິດຕະພັນ ຢູ່ໃນຍານພາຫະນະ ທຸກປະເພດ ທີ່ໄດ້ຜ່ານນ່ານຟ້າ, ໜ້າດິນ ແລະ ນ່ານນ້ຳຊົ່ວຄາວ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ທຸກການກະທຳ ທີ່ພົວພັນເຖິງການຄົ້ນຄວ້າວິທະຍາສາດ.

ມາດຕາ 20. ໃນກໍລະນີ ມີຄວາມຮຽກຮ້ອງຕ້ອງການທາງດ້ານສິດ ແລະ ຜົນປະໂຫຍດສ່ວນລວມໂດຍສະເພາະ ທີ່ພົວພັນເຖິງຄວາມປອດໄພ ຂອງຊາດ, ສະບຽງອາຫານ, ສຸຂະພາບ ຫລື ຄວາມຈຳເປັນໃນການພັດທະນາເສດຖະກິດແຫ່ງຊາດໃນຂົງເຂດໃດໜຶ່ງ ຫລື ຕາມການຕີລາຄາ ຂອງອົງການຄຸ້ມຄອງລັດທີ່ກ່ຽວຂ້ອງ ເຫັນວ່າການນຳໃຊ້ການປະດິດສ້າງ ທີ່ໄດ້ຮັບສິດທິບັດໄປແລ້ວນັ້ນ ບໍ່ຖືກຕ້ອງ ໂດຍເຈົ້າຂອງສິດທິບັດ ຫລື ຜູ້ທີ່ຖືກມອບສິດໃຫ້ນຳໃຊ້ການປະດິດສ້າງດັ່ງກ່າວ, ລັດຖະບານສາມາດຕັດສິນ ໃຫ້ອົງການຈັດຕັ້ງ ຫລື ບຸກຄົນທີສາມໃດໜຶ່ງ ນຳໃຊ້ການປະດິດສ້າງດັ່ງກ່າວໂດຍປາດສະຈາກຄວາມເຫັນດີເຫັນພ້ອມຂອງເຈົ້າຂອງສິດທິບັດ ແຕ່ການນຳໃຊ້ການປະດິດສ້າງດັ່ງກ່າວ ຈະຕ້ອງປະຕິບັດບົນພື້ນຖານ ຂອງການກຳນົດຂອບເຂດ ຂອງການອະນຸມັດ ແລະ ການໃຊ້ຈ່າຍຄ່າທົດ ແທນໃຫ້ແກ່ເຈົ້າຂອງສິດທິບັດ ຢ່າງສົມເຫດສົມຜົນ.

ມາດຕາ 21. ໃນກໍລະນີ ການປະດິດສ້າງ ທີ່ໄດ້ຮັບສິດທິບັດໄປແລ້ວນັ້ນບໍ່ໄດ້ຖືກນຳໃຊ້ ຫລື ນຳໃຊ້ບໍ່ເຕັມສ່ວນ ພາຍຫລັງສີ່ປີ ນັບແຕ່ວັນຍື່ນຄຳຮ້ອງ ຫລື ສາມປີ ນັບແຕ່ວັນອອກສິດທິບັດ ອົງການຈັດຕັ້ງຂຶ້ນທະບຽນ ສາມາດອອກໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້ ໂດຍການນຳໃຊ້ການປະດິດສ້າງດັ່ງກ່າວ ເຂົ້າສູ່ການຜະລິດ ຢູ່ພາຍໃນປະເທດ ຫລື ດ້ວຍການນຳເຂົ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເວັ້ນເສຍແຕ່ເຈົ້າຂອງສິດທິບັດມີເຫດຜົນອ້າງອີງທີ່ພຽງພໍ ຕໍ່ອົງການຈັດຕັ້ງຂຶ້ນທະບຽນ ກ່ຽວກັບການທີ່ບໍ່ໄດ້ນຳໃຊ້ການປະດິດສ້າງ ຫລື ນຳໃຊ້ການປະດິດສ້າງດັ່ງກ່າວບໍ່ເຕັມສ່ວນ.

ການຕົກລົງອອກໃບອະນຸຍາດ ຕ້ອງໄດ້ມີການກຳນົດເນື້ອໃນ ແລະ ຂອບເຂດຂອງການອະນຸຍາດ, ການກຳນົດໄລຍະເວລາ ຂອງການນຳໃຊ້ການປະດິດສ້າງ ແລະ ຈຳນວນເງິນ ທີ່ຈະຕ້ອງຈ່າຍໃຫ້ເຈົ້າຂອງສິດທິບັດ ຕະຫລອດຮອດເງື່ອນໄຂ ຂອງການສຳລະເງິນ.

ຜູ້ຮັບສິດນຳໃຊ້ໃບອະນຸຍາດ ມີສິດນຳໃຊ້ການປະດິດສ້າງດັ່ງກ່າວຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມການກຳນົດໄລຍະເວລາຂອງການຕົກລົງຢູ່ໃນໃບອະນຸຍາດ ແລະ ໃຫ້ນຳໃຊ້ການປະດິດສ້າງ ທີ່ໄດ້ຮັບສິດທິບັດໄປແລ້ວຢ່າງເຕັມສ່ວນ.

ໃນກໍລະນີ ການປະດິດສ້າງ ທີ່ໄດ້ກຳນົດຢູ່ໃນສິດທິບັດ ຫລື " ສິດທິບັດໃໝ່ " ບໍ່ໄດ້ຖືກນຳໃຊ້ ຢູ່ພາຍໃນປະເທດ ແຕ່ການປະດິດສ້າງດັ່ງກ່າວ ແມ່ນເຕັກໂນໂລຊີ ທີ່ທັນສະໃໝ ແລະ ມີຄຸນ

ຄ່າສູງທາງດ້ານເສດຖະກິດ ເຊິ່ງມີການພົວພັນກັບການປະດິດສ້າງ ທີ່ໄດ້ຮັບສິດທິບັດມາກ່ອນໜ້ານີ້ແລ້ວ ໃນເມື່ອມີການຮ້ອງຂໍຂອງເຈົ້າຂອງສິດທິບັດໃໝ່ ອົງການຈັດຕັ້ງຂຶ້ນທະບຽນ ຕ້ອງອອກໃບອະນຸຍາດສະເພາະ ທີ່ພົວພັນເຖິງສິດທິບັດໃໝ່ເທົ່ານັ້ນ ໂດຍຫລີກລ້ຽງການລະເມີດສິດທິບັດສະບັບກ່ອນໜ້ານີ້.

## ໝວດທີ III
## ອະນຸສິດທິບັດ

**ມາດຕາ 22.** " ອະນຸສິດທິບັດ " ແມ່ນ ເອກະສານຢັ້ງຢືນ ກ່ຽວກັບການປົກປ້ອງສິ່ງປະດິດ ເຊິ່ງ " ສິ່ງປະດິດ " ໝາຍເຖິງການປະດິດທາງດ້ານເຕັກນິກ ໂດຍການນຳໃຊ້ກົດເກນທຳມະຊາດ.

**ມາດຕາ 23.** ສິ່ງປະດິດໃດໜຶ່ງ ຈະມີສິດຮັບອະນຸສິດທິບັດໄດ້ ກໍຕໍ່ເມື່ອ ສິ່ງປະດິດດັ່ງກ່າວແມ່ນອັນໃໝ່ ແລະ ສາມາດນຳໃຊ້ເຂົ້າສູ່ການຜະລິດໄດ້ ເຊິ່ງສິ່ງປະດິດດັ່ງກ່າວໄດ້ພົວພັນເຖິງຮູບຊົງ ຫລື ຮູບຮ່າງ ຫລື ທັງສອງຢ່າງ ຂອງຜະລິດຕະພັນ.

**ມາດຕາ 24.** ເງື່ອນໄຂ ແລະ ສິດທິ ທີ່ຈະໄດ້ຮັບອະນຸສິດທິບັດ ໃຫ້ປະຕິບັດຕາມ ມາດຕາ 8 ແລະ ມາດຕາ 9; ສິ່ງປະດິດ ທີ່ບໍ່ອະນຸຍາດໃຫ້ປົກປ້ອງ ໃຫ້ປະຕິບັດຕາມ ມາດຕາ 10; ຄຳຮ້ອງຂໍອະນຸສິດທິບັດ ແລະ ຂັ້ນຕອນຕ່າງໆ ກ່ຽວກັບການຂໍຂຶ້ນທະບຽນສິ່ງປະດິດ ເພື່ອຂໍຮັບອະນຸສິດທິບັດນັ້ນ ໃຫ້ປະຕິບັດຕາມ ມາດຕາ 11, ມາດຕາ 12, ມາດຕາ 15 ແລະ ມາດຕາ 16 ຂອງດຳລັດສະບັບນີ້.

**ມາດຕາ 25.** ໃນໄລຍະການພິຈາລະນາ ຫລື ກ່ອນການອອກໃບອະນຸສິດທິບັດ ຜູ້ຮ້ອງຂໍສາມາດປ່ຽນຄຳຮ້ອງຂໍຂຶ້ນທະບຽນສິ່ງປະດິດ ເພື່ອຂໍຮັບອະນຸສິດທິບັດ ມາເປັນສິດທິບັດໄດ້ ເຊິ່ງອົງການຈັດຕັ້ງຂຶ້ນທະບຽນ ຈະຮັກສາການບັນທຶກວັນເວລາ ຂອງການຍື່ນຄຳຮ້ອງສະບັບເດີມ.

ຜູ້ຮ້ອງຂໍຂຶ້ນທະບຽນການປະດິດສ້າງ ສາມາດປ່ຽນຄຳຮ້ອງ ເພື່ອຂໍຮັບສິດທິບັດມາເປັນອະນຸສິດທິບັດໄດ້ ໃນໄລຍະການພິຈາລະນາ ຫລື ກ່ອນການອອກໃບສິດທິບັດ ເຊິ່ງອົງການຈັດຕັ້ງຂຶ້ນທະບຽນ ຈະຮັກສາການບັນທຶກວັນເວລາ ຂອງການຍື່ນຄຳຮ້ອງສະບັບເດີມ.

**ມາດຕາ 26.** ອາຍຸການ ຂອງອະນຸສິດທິບັດມີກຳນົດ 7 ປີ ນັບແຕ່ວັນຍື່ນຄຳຮ້ອງຂໍອະນຸສິດທິບັດ. ເພື່ອຮັກສາອາຍຸການຂອງອະນຸສິດທິບັດດັ່ງກ່າວ ເຈົ້າຂອງອະນຸສິດທິບັດ ຕ້ອງເສຍຄ່າທຳນຽມລ່ວງໜ້າແຕ່ລະປີ.

- ໃນກໍລະນີ ເຈົ້າຂອງອະນຸສິດທິບັດບໍ່ໄດ້ເສຍຄ່າທໍານຽມລ່ວງໜ້າແຕ່ລະປີ ຄໍາຮ້ອງຂໍອະນຸສິດທິບັດດັ່ງກ່າວ ຈະຖືກຖອນ ຫລື ອະນຸສິດທິບັດດັ່ງກ່າວຈະບໍ່ມີຜົນບັງຄັບໃຊ້.

- ໃນກໍລະນີ ມີເຫດຜົນອ້າງອີງ ກ່ຽວກັບຄວາມລ້າຊ້າໃນການສໍາລະຄ່າທໍານຽມ ອົງການຈັດຕັ້ງຂຶ້ນທະບຽນ ຈະອະນຸຍາດໃຫ້ໄດ້ພາຍໃນກໍານົດບໍ່ເກີນ 6 ເດືອນ.

ມາດຕາ 27. ກ່ຽວກັບສິດທິ ຂອງເຈົ້າຂອງອະນຸສິດທິບັດ ແລະ ຄວາມຮຽກຮ້ອງຕ້ອງການທາງດ້ານ ສິດ ແລະ ຜົນປະໂຫຍດລວມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ປະຕິບັດຕາມເນື້ອໃນຂອງມາດຕາ 18, ມາດຕາ 19, ມາດຕາ 20 ແລະ ມາດຕາ 21 ຂອງດໍາລັດສະບັບນີ້.

## ໝວດທີ IV
## ແບບອຸດສາຫະກໍາ

ມາດຕາ 28. " ແບບອຸດສາຫະກໍາ " ໝາຍເຖິງສິ່ງປະກອບ ຂອງເສັ້ນ ຫລື ສີສັນຕ່າງໆ, ຮູບແບບສາມມິຕິ ຫລື ວັດຖຸໃດໜຶ່ງ ເຊິ່ງອາດພົວພັນ ຫລື ບໍ່ພົວພັນກັບເສັ້ນ ຫລື ສີສັນດັ່ງກ່າວ ທີ່ໃຊ້ເປັນຕົ້ນສະບັບ ເພື່ອການຜະລິດອຸດສາຫະກໍາ ຫລື ຫັດຖະກໍາ ຫລື ສະແດງເຖິງຄຸນລັກສະນະສະເພາະ ຂອງຜະລິດຕະພັນໃດໜຶ່ງ ເຊິ່ງສາມາດຈໍາແນກ ແລະ ພິສູດໄດ້ດ້ວຍຕາເປົ່າ.

ມາດຕາ 29. ແບບອຸດສາຫະກໍາ ຈະຮັບການຂຶ້ນທະບຽນໄດ້ກໍຕໍ່ເມື່ອແບບດັ່ງກ່າວ ແມ່ນສິ່ງໃໝ່. ແບບອຸດສາຫະກໍາໃດໜຶ່ງຖືວ່າໃໝ່ ຖ້າຫາກແບບອຸດສາຫະກໍານັ້ນ ບໍ່ເຄີຍຖືກເປີດເຜີຍສູ່ສາທາລະນະຊົນມາກ່ອນ ຢູ່ແຫ່ງໃດໜຶ່ງໃນໂລກ ດ້ວຍວາລະສານ ຫລື ດ້ວຍການນໍາໃຊ້ຕົວຈິງ ຫລື ດ້ວຍຮູບການອື່ນ ກ່ອນວັນຍື່ນຄໍາຮ້ອງ ຫລື ກ່ອນວັນໄດ້ຮັບບຸລິມະສິດຂອງຄໍາຮ້ອງ ເພື່ອຂໍຂຶ້ນທະບຽນ.

ມາດຕາ 30. ແບບອຸດສາຫະກໍາ ທີ່ບໍ່ອະນຸຍາດໃຫ້ຂຶ້ນທະບຽນ ໃນເມື່ອແບບອຸດສາຫະກໍາດັ່ງກ່າວ ຂັດກັບຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂັດກັບຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ.

ມາດຕາ 31. ຜູ້ມີສິດທີ່ຮັບໃບທະບຽນແບບອຸດສາຫະກໍາ ແມ່ນຜູ້ອອກແບບ ຫລື ຜູ້ປະດິດສ້າງເຊິ່ງສອດຄ່ອງກັບເນື້ອໃນ ຂອງມາດຕາ 10 ທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

ມາດຕາ 32. ຄຳຮ້ອງຂໍຂຶ້ນທະບຽນແບບອຸດສາຫະກຳຕ້ອງປະກອບດ້ວຍ:

(1) ໃບຄຳຮ້ອງ;

(2) ຮູບແຕ້ມ, ຮູບຖ່າຍ ຫລື ເສັ້ນທີ່ປະກອບເປັນແບບອຸດສາຫະກຳ ທີ່ນຳໃຊ້ກັບຜະລິດຕະພັນໃດໜຶ່ງ ແລະ ການກຳນົດປະເພດ ຂອງຜະລິດຕະພັນ ທີ່ຈະນຳໃຊ້ແບບອຸດສາຫະກຳດັ່ງກ່າວ.

(3) ຕົວຢ່າງ ຂອງແບບອຸດສາຫະກຳ ໃນກໍລະນີເປັນຮູບແບບສອງມິຕິ.

(4) ໃນກໍລະນີ ຜູ້ຍື່ນຄຳຮ້ອງບໍ່ແມ່ນເຈົ້າຂອງແບບອຸດສາຫະກຳ ຕ້ອງມີໜັງສືມອບສິດໃຫ້ຜູ້ຍື່ນຄຳຮ້ອງ ເພື່ອຂໍຂຶ້ນທະບຽນແບບອຸດສາຫະກຳ ຄັດຕິດມາພ້ອມ.

- ໃນຄຳຮ້ອງຂໍຂຶ້ນທະບຽນສະບັບໜຶ່ງ ສາມາດໃຊ້ໄດ້ກັບສອງ ຫລື ຫລາຍແບບອຸດສາຫະກຳ ທີ່ນອນຢູ່ໃນໝວດດຽວ ຂອງການຈັດໝວດສາກົນ ຫລື ນອນຢູ່ໃນຊຸດດຽວ ຫລື ສ່ວນປະກອບ ຂອງຜະລິດຕະພັນນັ້ນ.

- ໃນຄຳຮ້ອງຂໍຂຶ້ນທະບຽນ ສາມາດສະເໜີບໍ່ໃຫ້ມີການພິມເຜີຍແຜ່ ຜົນຂອງການຂຶ້ນທະບຽນດັ່ງກ່າວໄດ້ໃນໄລຍະໃດໜຶ່ງ ພາຍຫລັງຈາກການຂຶ້ນທະບຽນແລ້ວ ແຕ່ບໍ່ໃຫ້ກາຍ 12 ເດືອນ ນັບຈາກວັນເວລາທີ່ມາຍື່ນຄຳຮ້ອງ ຫລື ວັນເວລາທີ່ໄດ້ຮັບບູລິມະສິດຂອງຄຳຮ້ອງ ແຕ່ໃນໄລຍະດັ່ງກ່າວຜູ້ກ່ຽວບໍ່ມີສິດຮ້ອງຟ້ອງບຸກຄົນ ຫລື ນິຕິບຸກຄົນອື່ນ ກ່ຽວກັບການລະເມີດແບບອຸດສາຫະກຳຂອງຕົນ.

ຜູ້ຍື່ນຄຳຮ້ອງ ສາມາດຖອນຄຳຮ້ອງໄດ້ທຸກເວລາ ໃນໄລຍະການພິຈາລະນາຄຳຮ້ອງດັ່ງກ່າວ.

ມາດຕາ 33. ໃນເມື່ອຄຳຮ້ອງ ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດຢູ່ໃນມາດຕາ 32 ຂອງດຳລັດສະບັບນີ້ ອົງການຈັດຕັ້ງຂຶ້ນທະບຽນຈະບັນທຶກເວລາ ແລະ ວັນມາຍື່ນຄຳຮ້ອງ ພ້ອມທັງອອກໃບຢັ້ງຢືນໃຫ້.

ໃນກໍລະນີ ຄຳຮ້ອງບໍ່ຖືກຕ້ອງຕາມເງື່ອນໄຂທີ່ກ່າວມານັ້ນ ອົງການຈັດຕັ້ງຂຶ້ນທະບຽນຈະແນະນຳໃຫ້ຜູ້ຍື່ນຄຳຮ້ອງ ດັດແກ້ຄຳຮ້ອງດັ່ງກ່າວ ສ່ວນການບັນທຶກເວລາ ແລະ ວັນຍື່ນຄຳຮ້ອງນັ້ນຈະປະຕິບັດຕາມໄລຍະການຍື່ນຄຳຮ້ອງເທື່ອສຸດທ້າຍ.

ມາດຕາ 34. ພາຍຫລັງການພິຈາລະນາຄຳຮ້ອງ ທີ່ເຫັນວ່າຄົບຖ້ວນຕາມເງື່ອນໄຂຕ່າງໆ ຂອງດຳລັດສະບັບນີ້ອົງການຈັດຕັ້ງຂຶ້ນທະບຽນຈະແຈ້ງໃຫ້ເສຍຄ່າທຳນຽມຕາມລະບຽບການທີ່ກ່ຽວຂ້ອງ ແລະ ອອກໃບທະບຽນແບບອຸດສາຫະກຳໃຫ້ຜູ້ຍື່ນຄຳຮ້ອງ ພ້ອມທັງເຜີຍແຜ່ສູ່ສາທາລະນະຊົນ ຫລື ພິມເຜີຍແຜ່ຕາມການສະເໜີ ທີ່ກຳນົດຢູ່ຄຳຮ້ອງຂໍຂຶ້ນທະບຽນທີ່ສອດຄອງກັບມາດຕາ 32 ຂອງດຳລັດສະບັບນີ້.

ໃນກໍລະນີ ຄຳຮ້ອງຖືກປະຕິເສດ ອົງການຈັດຕັ້ງຂຶ້ນທະບຽນຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບກ່ຽວກັບການຕັດສິນດັ່ງກ່າວ.

ມາດຕາ 35. ອາຍຸການ ຂອງໃບທະບຽນແບບອຸດສາຫະກຳ ມີກຳນົດ 5 ປີ ນັບແຕ່ວັນເວລາຍື່ນຄຳຮ້ອງຂໍຂຶ້ນທະບຽນ ແລະ ສາມາດຕໍ່ອາຍຸໄດ້ສອງເທື່ອຕິດຕໍ່ກັນຄື ແຕ່ລະເທື່ອມີອາຍຸການ 5 ປີ ໂດຍໃຫ້ຍື່ນຄຳຮ້ອງຂໍຕໍ່ອາຍຸ ພາຍໃນກຳນົດ 90 ວັນ ກ່ອນວັນໝົດອາຍຸການ .

ມາດຕາ 36. ເຈົ້າຂອງແບບອຸດສາຫະກຳ ມີສິດມອບແບບອຸດສາຫະກຳ ທີ່ຕົນໄດ້ຂຶ້ນທະບຽນແລ້ວນັ້ນໃຫ້ບຸກຄົນອື່ນນຳໃຊ້ໄດ້ ແຕ່ການມອບສິດດັ່ງກ່າວ ຕ້ອງໄດ້ມີການຢັ້ງຢືນເປັນລາຍລັກອັກສອນ ແລະ ຖືກຮັບຮູ້ຈາກອົງການຈັດຕັ້ງຂຶ້ນທະບຽນແບບອຸດສາຫະກຳ. ສ່ວນການນຳໃຊ້ແບບອຸດສາຫະກຳໃນມາດຕານີ້ ໝາຍເຖິງການຜະລິດ, ການຂາຍ ຫລື ການຄຸ້ມຄອງການນຳເຂົ້າສິນຄ້າທີ່ພົວພັນເຖິງແບບອຸດສາຫະກຳດັ່ງກ່າວ.

ມາດຕາ 37. ເຈົ້າຂອງທະບຽນແບບອຸດສາຫະກຳ ມີສິດສະເໜີຕໍ່ອົງການຈັດຕັ້ງຂຶ້ນທະບຽນແບບອຸດສາຫະກຳ ຫລື ຮ້ອງຟ້ອງຕໍ່ສານກ່ຽວກັບການລະເມີດ ຂອງບຸກຄົນ ຫລື ນິຕິບຸກຄົນອື່ນ ທີ່ໄດ້ນຳໃຊ້ແບບອຸດສາຫະກຳ ຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ.

## ໝວດທີ V
## ມາດຕະການຕໍ່ຜູ້ລະເມີດ

ມາດຕາ 38. ບຸກຄົນ ຫລື ນິຕິບຸກຄົນ ທີ່ນຳໃຊ້ການປະດິດສ້າງ, ສິ່ງປະດິດ ແລະ ແບບອຸດສາຫະກຳ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງ ສິດທິບັດ, ອະນຸສິດທິບັດ ແລະ ເຈົ້າຂອງທະບຽນແບບອຸດສາຫະກຳ ຖືວ່າເປັນຜູ້ລະເມີດສິດທິ ກ່ຽວກັບ ສິດທິບັດ, ອະນຸສິດທິບັດ ແລະ ແບບອຸດສາຫະກຳ.

ຜູ້ລະເມີດສິດທິດັ່ງກ່າວ ຈະຖືກຕັກເຕືອນ ຫລື ດຳເນີນຄະດີ ຕາມກົດໝາຍ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລ້ວແຕ່ກໍລະນີ.

ມາດຕາ 39. ບຸກຄົນທີ່ສາມ ສາມາດສະເໜີ ຕໍ່ອົງການຈັດຕັ້ງຂຶ້ນທະບຽນການປະດິດສ້າງ, ສິ່ງປະດິດ ແລະ ແບບອຸດສາຫະກຳ ຫລື ຮ້ອງຟ້ອງຕໍ່ສານ ເພື່ອຂໍລົບລ້າງ ສິດທິບັດ, ອະນຸສິດທິບັດ ແລະ ໃບທະບຽນແບບອຸດສາຫະກຳ ທີ່ເຫັນວ່າບໍ່ສອດຄ່ອງກັບເງື່ອນໄຂຕ່າງໆ ຕາມທີ່ໄດ້ກຳນົດຢູ່ໃນດຳລັດສະບັບນີ້.

# ໝວດທີ VI
# ບົດບັນຍັດສຸດທ້າຍ

**ມາດຕາ 40.** ມອບໃຫ້ ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປັນຜູ້ປະສານສົມທົບ ກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍດຳລັດສະບັບນີ້ ໃຫ້ເປັນອັນລະອຽດ ຮັບປະກັນຄວາມສັກສິດ ໃນການກວດກາ ແລະ ເຄື່ອນໄຫວຢ່າງເຂັ້ມງວດ.

**ມາດຕາ 41.** ສຳນັກງານ ນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ກຳແພງນະຄອນ ແລະ ເຂດພິເສດຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 42.** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ ໑໗ -01- ໒໐໐໒

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ